**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

---

**ສຳນັກງານນາຍົກລັດຖະມົນຕີ** **ເລກທີ 93 /ນຍ**

**ນະຄອນຫຼວງວຽງຈັນ, ວັນທີ 13.03.2007**

# ດຳລັດ

## ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງ ກຳລັງກອງຫຼອນ, ປກສ ບ້ານ, ປກສ ກຸ່ມບ້ານ, ກຳລັງປ້ອງກັນພາຍໃນ ແລະກຳລັງປ້ອງກັນຕົວ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານແຫ່ງ ສປປ ລາວ ສະບັບເລກທີ່ 02/ສພຊ, ລົງວັນທີ່ 06 ພຶດສະພາ ປີ 2003.
- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນແຫ່ງ ສປປ ລາວ ສະບັບເລກທີ່ 03/ສພຊ, ລົງວັນທີ່ 21 ຕຸລາ ປີ 2003.
- ອີງຕາມ ກົດໝາຍວ່າດ້ວຍພັນທະປ້ອງກັນຊາດ ສະບັບເລກທີ່ 02/ສພຊ, ລົງວັນທີ່ 08 ມີນາ ປີ 1995.
- ອີງຕາມ ກົດໝາຍວ່າດ້ວຍທະບຽນຄອບຄົວ ສະບັບເລກທີ່ 03/ສປສ, ລົງວັນທີ່ 30 ທັນວາ ປີ 1991.
- ອີງຕາມ ໜັງສືສະເໜີຂອງລັດຖະມົນຕີ ວ່າການກະຊວງປ້ອງກັນປະເທດ ແລະລັດຖະມົນຕີ ວ່າການກະຊວງປ້ອງກັນຄວາມສະຫງົບ ສະບັບເລກທີ່ 1001/ປກສ, ລົງວັນທີ່ 26 ທັນວາ ປີ 2006.

### ນາຍົກລັດຖະມົນຕີ ອອກດຳລັດ:

### ໝວດທີ່ I

### ບົດບັນຍັດທົ່ວໄປ

ມາດຕາ 1. ຈຸດປະສົງ

ດຳລັດສະບັບນີ້ກຳນົດ ຫຼັກການ, ລະບຽບການ, ວິທີການ ແລະມາດຕະການໃນການຈັດຕັ້ງ ແລະການເຄື່ອນໄຫວຂອງກຳລັງກອງຫຼອນ, ກຳລັງ ປກສ ບ້ານ, ກຳລັງ ປກສ ກຸ່ມບ້ານ, ກຳລັງປ້ອງກັນພາຍໃນ ແລະກຳລັງປ້ອງກັນຕົວ ເພື່ອແນໃສ່ຈັດຕັ້ງປະຕິບັດພັນທະປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ປົກປັກຮັກສາປະເທດ

ຊາດ, ຊີວິດ, ຊັບສິນຂອງປະຊາຊົນ ເຮັດໃຫ້ສັງຄົມມີຄວາມສະຫງົບສຸກ ແລະສ້າງສາພັດທະນາປະເທດຊາດໃຫ້ຈະເລີນຮຸ່ງເຮືອງ.

**ມາດຕາ 2. ນະໂຍບາຍໃນການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ**

ລັດຖະບານແຫ່ງ ສປປ ລາວ ກໍານົດແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເປັນໜ້າທີ່ຂອງທົ່ວປວງຊົນຮອບດ້ານ, ທຸກອົງການຈັດຕັ້ງ ແລະພົນລະເມືອງລາວທຸກຄົນມີພັນທະໃນການປົກປັກຮັກສາຄວາມເປັນເອກະລາດ, ອໍານາດອະທິປະໄຕ ແລະຜືນແຜ່ນດິນອັນຄົບຖ້ວນຂອງປະເທດຊາດ.

**ມາດຕາ 3. ຂອບເຂດການນໍາໃຊ້ດໍາລັດ**

ດໍາລັດສະບັບນີ້ມີຜົນໃຊ້ບັງຄັບໃນກໍາລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນຕະຫລອດຮອດສໍານັກງານ-ອົງການ, ໂຮງຈັກ, ໂຮງງານ, ກິດຈະການຕ່າງໆ ແລະປະຊາຊົນບັນດາເຜົ່າໃນຂອບເຂດ ສປປ ລາວ.

## ໝວດທີ່ II
## ທີ່ຕັ້ງ ແລະພາລະບົດບາດ

**ມາດຕາ 4. ທີ່ຕັ້ງ ແລະພາລະບົດບາດຂອງກໍາລັງກອງຫຼອນ, ກໍາລັງປ້ອງກັນຄວາມສະຫງົບບ້ານ**

ກໍາລັງກອງຫຼອນ, ກໍາລັງປ້ອງກັນຄວາມສະຫງົບບ້ານ ແມ່ນກໍາລັງເຄິ່ງປະກອບອາວຸດຂອງປະຊາຊົນບັນດາເຜົ່າ ຊຶ່ງຕິດພັນກັບການຜະລິດ, ປະຕິບັດໜ້າທີ່ປ້ອງກັນຊາດ-ປ້ອງກັນຄວາມສະຫງົບຢູ່ຮາກຖານ ຂຶ້ນກັບອົງການປົກຄອງຂັ້ນບ້ານ ແລະກຸ່ມບ້ານ.

ກໍາລັງກອງຫຼອນ ສາຍຕັ້ງຂຶ້ນກັບກະຊວງປ້ອງກັນປະເທດ; ກໍາລັງປ້ອງກັນຄວາມສະຫງົບບ້ານ ສາຍຕັ້ງຂຶ້ນກັບກະຊວງປ້ອງກັນຄວາມສະຫງົບ.

ມີພາລະບົດບາດປະຕິບັດໜ້າທີ່ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມໃນຂອບເຂດບ້ານ ແລະກຸ່ມບ້ານຂອງຕົນ.

**ມາດຕາ 5. ທີ່ຕັ້ງ ແລະພາລະບົດບາດຂອງກໍາລັງປ້ອງກັນຄວາມສະຫງົບກຸ່ມບ້ານ (ປກສ ກຸ່ມບ້ານ)**

ກໍາລັງ ປກສ ກຸ່ມບ້ານ ແມ່ນກໍາລັງປ້ອງກັນຄວາມສະຫງົບ ຊຶ່ງເປັນຕໍາຫລວດອາຊີບທີ່ຖືກແຕ່ງຕັ້ງລົງເຮັດໜ້າທີ່ ປະຈໍາຢູ່ແຕ່ລະກຸ່ມບ້ານ ຂຶ້ນກັບການຊີ້ນໍາຂອງຄະນະຮັບຜິດຊອບກຸ່ມບ້ານ, ກອງບັນຊາການ ປກສ ເມືອງ ຕາມສາຍຕັ້ງ (ກະຊວງປ້ອງກັນຄວາມສະຫງົບ).

ມີພາລະບົດບາດທຽບເທົ່າກັບພະແນກຂອງກອງບັນຊາການ ປກສ ເມືອງ, ເປັນເສນາທິການໃຫ້ກອງບັນຊາການ ປກສ ເມືອງ, ເຈົ້າເມືອງໃນການຄຸ້ມຄອງລັດ, ຄຸ້ມຄອງສັງຄົມ, ປົກປັກຮັກສາຄວາມສະຫງົບ ທາງດ້ານການເມືອງ ແລະຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມໃນກຸ່ມບ້ານທີ່ຕົນເອງຮັບຜິດຊອບ.

**ມາດຕາ 6. ທີ່ຕັ້ງ ແລະພາລະບົດບາດຂອງກຳລັງປ້ອງກັນພາຍໃນ**

ກຳລັງປ້ອງກັນພາຍໃນ ແມ່ນພະນັກງານຢູ່ໃນສຳນັກງານທີ່ຖືກຈັດຕັ້ງໃຫ້ເຮັດວຽກງານປ້ອງກັນຄວາມສະຫງົບ ຢູ່ບັນດາກະຊວງ, ອົງການທຽບເທົ່າກະຊວງ, ສຳນັກງານ-ອົງການ, ໂຮງຈັກ, ໂຮງງານ ແລະກິດຈະການຕ່າງໆ ທີ່ຂຶ້ນກັບການຊີ້ນຳຂອງຄະນະນຳສູງສຸດຢູ່ຂັ້ນນັ້ນ ແລະຄະນະນຳກະຊວງປ້ອງກັນຄວາມສະຫງົບ; ດ້ານວຽກງານວິຊາສະເພາະ ແມ່ນຂຶ້ນກັບກະຊວງປ້ອງກັນຄວາມສະຫງົບ.

ກຳລັງປ້ອງກັນພາຍໃນມີພາລະບົດບາດ ເປັນເສນາທິການຈັດຕັ້ງປະຕິບັດວຽກງານປ້ອງກັນພາຍໃນ ຕໍ່ຖັນແຖວພະນັກງານລັດຖະກອນໃຫ້ແກ່ກະຊວງ, ອົງການທຽບເທົ່າກະຊວງ, ສຳນັກງານ-ອົງການ, ໂຮງຈັກ, ໂຮງງານ ແລະກິດຈະການຕ່າງໆ ເຄື່ອນໄຫວຕາມຫລັກການວິຊາສະເພາະປ້ອງກັນຄວາມສະຫງົບທີ່ໄດ້ກຳນົດໄວ້ໃນຂອບເຂດທີ່ຕົນຮັບຜິດຊອບ.

**ມາດຕາ 7. ທີ່ຕັ້ງ ແລະພາລະບົດບາດຂອງກຳລັງປ້ອງກັນຕົວ**

ກຳລັງປ້ອງກັນຕົວ ແມ່ນພະນັກງານລັດຖະກອນທີ່ຖືກແຕ່ງຕັ້ງໃຫ້ເຮັດວຽກງານ ປ້ອງກັນຄວາມສະຫງົບ, ເປັນກຳລັງເຄິ່ງປະກອບອາວຸດ ທີ່ຈັດຕັ້ງຂຶ້ນຢູ່ຕາມກະຊວງ, ອົງການທຽບເທົ່າກະຊວງ, ສຳນັກງານ-ອົງການ, ໂຮງຈັກ, ໂຮງງານ ແລະກິດຈະການຕ່າງໆ ທີ່ມີຄວາມຈຳເປັນສະເພາະ ທີ່ຂຶ້ນກັບການຊີ້ນຳຂອງຄະນະນຳ ຂອງຕົນ. ດ້ານວຽກງານວິຊາສະເພາະ ແມ່ນຂຶ້ນກັບກະຊວງປ້ອງກັນປະເທດ ແລະກະຊວງປ້ອງກັນຄວາມສະຫງົບຕາມຂອບເຂດຄວາມຮັບຜິດຊອບ.

ມີພາລະບົດບາດຮັບປະກັນຄວາມປອດໄພ, ຄວາມສະຫງົບ ແລະຄວາມເປັນລະບຽບຮຽບຮ້ອຍໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

## ໝວດທີ່ III
## ສິດ ແລະໜ້າທີ່

**ມາດຕາ 8. ສິດ ແລະໜ້າທີ່ ຂອງກຳລັງກອງຫລອນ**

**ກຳລັງກອງຫລອນມີສິດດັ່ງນີ້:**

1. ປະສານສົມທົບກັບອົງການປົກຄອງ ແລະພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄ້ວາ, ວາງແຜນການເຄື່ອນໄຫວປ້ອງກັນບ້ານ, ກຸ່ມບ້ານໃຫ້ມີຄວາມສະຫງົບ.

2. ເຄື່ອນໄຫວຕາມການມອບໝາຍຂອງກະຊວງປ້ອງກັນປະເທດ, ກອງບັນຊາການທະຫານແຂວງ, ນະຄອນຫລວງ ແລະເມືອງ.

3. ໄດ້ຮັບການປະກອບ ແລະນຳໃຊ້ອາວຸດ, ອຸປະກອນທີ່ຈຳເປັນຈຳນວນໜຶ່ງ.

4. ໄດ້ຮັບນະໂຍບາຍອຸດໜູນ ແລະນະໂຍບາຍອື່ນໆຕາມທີ່ໄດ້ກຳນົດໄວ້ຢູ່ໃນລະບຽບກົດໝາຍ.

**ກຳລັງກອງຫລອນມີໜ້າທີ່ດັ່ງນີ້:**

1. ປົກປັກຮັກສາປະເທດຊາດ ແລະໝາກຜົນຂອງການປະຕິວັດ, ປົກປັກຮັກສາຄວາມສະຫງົບ ແລະຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມໃນຂອບເຂດທີ່ຕົນຮັບຜິດຊອບ.

2. ຍົກສູງສະຕິລະວັງຕົວ, ຕ້ານທຸກກົນອຸບາຍທຳລາຍມ້າງເພຂອງສັດຕູ, ກຽມພ້ອມສູ້ຮົບ ແລະສູ້ຮົບຢ່າງພີລະອາດຫານ, ສະກັດກັ້ນທຸກການກະທຳຜິດຕໍ່ລະບຽບກົດໝາຍ.

3. ເຂົ້າຮ່ວມ ແລະເປັນແບບຢ່າງໃນການຜະລິດ, ສ້າງເສດຖະກິດ, ແກ້ໄຂຊີວິດການເປັນຢູ່ໃຫ້ເຂັ້ມແຂງ ແລະອຸດົມຮັ່ງມີ.

4. ຕັ້ງໜ້າຝຶກຝົນຫລໍ່ຫລອມຕົນເອງ, ຮ່ຳຮຽນການເມືອງ, ຍົກລະດັບຄວາມຮູ້ທາງດ້ານການສຶກສາ, ວັດທະນະທຳ, ການທະຫານ ແລະລະບຽບກົດໝາຍ.

ກຽມພ້ອມປະຕິບັດມະຕິຄຳສັ່ງຂອງຂັ້ນເທິງ.

**ມາດຕາ 9. ສິດ ແລະໜ້າທີ່ ຂອງກຳລັງປ້ອງກັນຄວາມສະຫງົບບ້ານ (ປກສ ບ້ານ)**

**ກຳລັງ ປກສ ບ້ານມີສິດດັ່ງນີ້:**

1. ປະສານສົມທົບກັບກຳລັງກອງຫຼອນ, ກຳລັງ ປກສ ກຸ່ມບ້ານ, ກຳລັງປ້ອງກັນຕົວ, ກຳລັງຮັກສາຄວາມປອດໄພທີ່ມີຢູ່ພາຍໃນບ້ານ, ບໍລິເວນບ້ານໃກ້ຄຽງ ໃນການປຶກສາຫາລືວາງແຜນກ່ຽວກັບການຮັກສາຄວາມສະຫງົບຢູ່ພາຍໃນບ້ານ.

2. ກວດກາຄຸ້ມຄອງ ແລະສະເໜີຢັ້ງຢືນການຂຶ້ນທະບຽນສຳມະໂນຄົວ.

3. ໄດ້ຮັບການປະກອບ ແລະນຳໃຊ້ອາວຸດ, ພາຫະນະອຸປະກອນ, ຮູບການ ແລະວິທີການວິຊາສະເພາະທີ່ຈຳເປັນໃນການເຄື່ອນໄຫວວຽກງານຖືກຕາມໜ້າທີ່ ແລະຫລັກການຄຸ້ມຄອງຂອງກຳລັງປ້ອງກັນຄວາມສະຫງົບ.

4. ເຄື່ອນໄຫວຕາມການມອບໝາຍຂອງກະຊວງປ້ອງກັນຄວາມສະຫງົບ, ກອງບັນຊາການ ປກສ ແຂວງ, ນະຄອນຫລວງ ແລະເມືອງ.

5. ໄດ້ຮັບນະໂຍບາຍອຸດໜູນ ແລະນະໂຍບາຍອື່ນໆຕາມທີ່ໄດ້ກຳນົດໄວ້ຢູ່ໃນລະບຽບກົດໝາຍ.

6. ຜູ້ທີ່ມີເງື່ອນໄຂກໍ່ສະເໜີເຂົ້າເປັນກຳລັງປ້ອງກັນຄວາມສະຫງົບອາຊີບ, ໄດ້ຮັບການຮ່ຳຮຽນວິຊາສະເພາະ ຫຼື ປະຈຳການຢູ່ ປກສ ກຸ່ມບ້ານ ຕາມຄວາມເໝາະສົມ.

**ກຳລັງ ປກສ ບ້ານມີໜ້າທີ່ ດັ່ງນີ້:**

1. ສຶກສາອົບຮົມປະຊາຊົນເຊື່ອມຊຶມແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ, ກົດລະບຽບຂອງບ້ານ, ຮູ້ຈຳແນກໄດ້ມິດ ແລະສັດຕູຢ່າງຈະແຈ້ງ, ເຂົ້າຮ່ວມວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບຢ່າງເປັນເຈົ້າການ.

2. ກຳແໜ້ນສະພາບສຳມະໂນຄົວ, ການເຄື່ອນໄຫວຕ່າງໆຂອງພົນລະເມືອງໃນແຕ່ລະຄອບຄົວ (ນັບທັງຄົນຕ່າງດ້າວ ແລະຄົນຕ່າງປະເທດ).

3. ເກັບກຳເປົ້າໝາຍປະເພດຕ່າງໆພາຍໃນບ້ານ ແລະເປົ້າໝາຍບໍ່ດີຢູ່ເຂດອື່ນ ເຂົ້າມາພັກເຊົາ, ເຄື່ອນໄຫວຢູ່ພາຍໃນບ້ານຂອງຕົນ.

4. ປະສານສົມທົບກັບກຳລັງກອງຫຼອນ, ກຳລັງ ປກສ ກຸ່ມບ້ານ, ກຳລັງປ້ອງກັນຕົວ, ກຳລັງຮັກສາຄວາມປອດໄພ ທີ່ມີຢູ່ພາຍໃນບ້ານ, ບໍລິເວນບ້ານໃກ້ຄຽງໃນການສ້າງແຜນການຮັກສາຄວາມສະຫງົບຢູ່ພາຍໃນບ້ານ.

5. ສະກັດກັ້ນ, ປ້ອງກັນເຫດການ ແລະລາຍງານສະເໜີເຫດການຕ່າງໆ ທີ່ເກີດຂຶ້ນຢູ່ພາຍໃນບ້ານ ຕໍ່ຂັ້ນເທິງຂອງຕົນເພື່ອແກ້ໄຂໃຫ້ທັນການ.

**ມາດຕາ 10. ສິດ ແລະໜ້າທີ່ ຂອງກຳລັງປ້ອງກັນຄວາມສະຫງົບກຸ່ມບ້ານ (ປກສ ກຸ່ມບ້ານ)**

**ກຳລັງ ປກສ ກຸ່ມບ້ານມີສິດດັ່ງນີ້:**

1. ຊອກຮູ້, ຄຸ້ມຄອງ, ຕິດຕາມເປົ້າໝາຍທຸກປະເພດທີ່ມີການເຄື່ອນໄຫວກໍ່ຄວາມບໍ່ສະຫງົບຢູ່ໃນຂອບເຂດກຸ່ມບ້ານຕົນຮັບຜິດຊອບ ເພື່ອປະສານສົມທົບກັບກອງບັນຊາການ ປກສ ເມືອງ ໃນການແກ້ໄຂຕາມຫລັກການວິຊາສະເພາະ.

2. ໄດ້ຮັບການປະກອບ ແລະນຳໃຊ້ອາວຸດ, ພາຫະນະອຸປະກອນ, ຮູບການ ແລະວິທີການວິຊາສະເພາະທີ່ຈຳເປັນໃນການເຄື່ອນໄຫວວຽກງານ ຖືກຕາມໜ້າທີ່ ແລະຫລັກການຄຸ້ມຄອງຂອງກຳລັງປ້ອງກັນຄວາມສະຫງົບ ໄດ້ກຳນົດໄວ້.

3 ປະສານສົມທົບກັບພາກສ່ວນກ່ຽວຂ້ອງໃນການຄົ້ນຄ້ວາສ້າງແຜນການ, ວາງມາດຕະການ, ວິທີການດ້ານຕ່າງໆ ໃນການຮັກສາຄວາມສະຫງົບ, ການປະຕິບັດນະໂຍບາຍຕໍ່ວຽກງານດັ່ງກ່າວໃນຂອບເຂດກຸ່ມບ້ານທີ່ຕົນຮັບຜິດຊອບ.

4. ກວດກາ ແລະສະເໜີ ປກສ ບ້ານ ໃຫ້ຫົວໜ້າກອງບັນຊາການ ປກສ ເມືອງ ພິຈາລະນາແຕ່ງຕັ້ງ ແລະປົດຕຳແໜ່ງ.

5. ໄດ້ຮັບນະໂຍບາຍອຸດໜູນ ແລະນະໂຍບາຍອື່ນໆ ຕາມທີ່ໄດ້ກຳນົດໄວ້ຢູ່ໃນລະບຽບຂອງກຳລັງປ້ອງກັນຄວາມສະຫງົບ ແລະກົດໝາຍອື່ນໆ.

**ກຳລັງ ປກສ ກຸ່ມບ້ານມີໜ້າທີ່ດັ່ງນີ້:**

1. ສຶກສາອົບຮົມປະຊາຊົນເຊື່ອມຊຶມ ແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ, ກົດລະບຽບຂອງບ້ານ, ຮູ້ຈຳແນກໄດ້ມິດ ແລະສັດຕູຢ່າງຈະແຈ້ງ, ເຂົ້າຮ່ວມວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບຢ່າງເປັນເຈົ້າການ ນຳພາຂຶ້ນທະບຽນ ແລະຄຸ້ມຄອງສຳມະໂນຄົວ, **<u>ກຳແໜ້ນການປ່ຽນແປງຂອງພົນລະເມືອງຕາມຫລັກການວິຊາສະເພາະ.</u>**

2. **ກຳແໜ້ນເປົ້າໝາຍເຄື່ອນ<u>ໄຫວບໍ່ດີທຸກປະເພດ</u>** ຕາມແຕ່ລະໄລຍະໃນຂອບເຂດຕົນຮັບຜິດຊອບ.

3. **<u>ນຳພາປັບປຸງກໍ່ສ້າງກຳລັງ ປກສ ບ້ານ</u>** ໃຫ້ຮູ້ ແລະສາມາດເຄື່ອນໄຫວວຽກງານວິຊາສະເພາະຕາມພາລະບົດບາດໜ້າທີ່.

ນອກຈາກສາມໜ້າທີ່ຕົ້ນຕໍດັ່ງກ່າວຍັງມີໜ້າທີ່ປະຕິບັດຕາມພາລະບົດບາດລວມຂອງກຳລັງປ້ອງກັນຄວາມສະຫງົບ.

**ມາດຕາ 11. ສິດ ແລະໜ້າທີ່ ຂອງກຳລັງປ້ອງກັນພາຍໃນ**

**ກຳລັງປ້ອງກັນພາຍໃນມີສິດດັ່ງນີ້:**

1. ຄົ້ນຄວ້າ ແລະນຳສະເໜີຄະນະນຳຂອງຕົນກ່ຽວກັບທິດທາງແຜນການ, ວິທີການ, ການເຄື່ອນໄຫວ

ແລະມາດຕະການຕ່າງໆກ່ຽວກັບວຽກງານປ້ອງກັນຄວາມສະຫງົບໃນຂົງເຂດສຳນັກງານ-ອົງການຂອງຕົນ.

2. ເຄື່ອນໄຫວຕາມການມອບໝາຍຂອງຄະນະນຳຂັ້ນຂອງຕົນ ແລະຄະນະນຳກະຊວງປ້ອງກັນຄວາມສະຫງົບ.

3. ໄດ້ຮັບການປະກອບ ແລະນຳໃຊ້ອາວຸດ, ພາຫະນະອຸປະກອນທີ່ຈຳເປັນຈຳນວນໜຶ່ງ ຕາມໜ້າທີ່ວິຊາສະເພາະຂອງຕົນ.

4. ໄດ້ຮັບນະໂຍບາຍອຸດໜູນ ແລະນະໂຍບາຍອື່ນໆຕາມທີ່ໄດ້ກຳນົດໄວ້ຢູ່ໃນລະບຽບກົດໝາຍ.

**ກຳລັງປ້ອງກັນພາຍໃນມີໜ້າທີ່ດັ່ງນີ້:**

1. ກຳແໜ້ນແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ.

2. ເປັນເສນາທິການໃຫ້ຄະນະນຳກະຊວງ, ອົງການທຽບເທົ່າກະຊວງ, ສຳນັກງານ-ອົງການຂອງຕົນໃນການກຳສະພາບການຮອບດ້ານກ່ຽວກັບວຽກງານປ້ອງກັນຄວາມສະຫງົບພາຍໃນຕໍ່ຖັນແຖວພະນັກງານ, ລັດຖະກອນໃນຂອບເຂດຕົນຮັບຜິດຊອບ.

3. ປະສານສົມທົບກັບກະຊວງປ້ອງກັນປະເທດ, ກະຊວງປ້ອງກັນຄວາມສະຫງົບ ແລະກົມວິຊາສະເພາະທີ່ກ່ຽວຂ້ອງ ໃນການສະກັດກັ້ນ ແລະແກ້ໄຂສະພາບການດ້ານຕ່າງໆ ທີ່ພົວພັນເຖິງວຽກງານປ້ອງກັນຄວາມສະຫງົບຢູ່ໃນສຳນັກງານຂອງຕົນ.

**ມາດຕາ 12. ສິດ ແລະໜ້າທີ່ ຂອງກຳລັງປ້ອງກັນຕົວ**

**ກຳລັງປ້ອງກັນຕົວມີສິດດັ່ງນີ້:**

1. ເຄື່ອນໄຫວຕາມພາລະບົດບາດ, ການມອບໝາຍຂອງກະຊວງປ້ອງກັນປະເທດ ແລະກະຊວງປ້ອງກັນຄວາມສະຫງົບ.

2. ໄດ້ຮັບການປະກອບອາວຸດ ແລະອຸປະກອນທີ່ຈຳເປັນຈຳນວນໜຶ່ງ ເພື່ອຮັບໃຊ້ໃນການເຄື່ອນໄຫວເຮັດໜ້າທີ່ຂອງຕົນ.

3. ປະສານສົມທົບທຸກພາກສ່ວນທີ່ມີການພົວພັນດ້ານວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບເພື່ອວາງແຜນການປ້ອງກັນຄວາມສະຫງົບໃນຂອບເຂດທີ່ຕົນຮັບຜິດຊອບ.

4. ໄດ້ຮັບນະໂຍບາຍອຸດໜູນ ແລະນະໂຍບາຍຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ກຳລັງປ້ອງກັນຕົວມີໜ້າທີ່ດັ່ງນີ້:**

1. ປົກປັກຮັກສາປະເທດຊາດ ແລະໝາກຜົນຂອງການປະຕິວັດ, ປົກປັກຮັກສາຄວາມສະຫງົບ ແລະຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມໃນຂອບເຂດທີ່ຕົນຮັບຜິດຊອບ.

2. ຍົກສູງສະຕິລະວັງຕົວ, ຕ້ານທຸກກົນອຸບາຍທຳລາຍມ້າງເພຂອງສັດຕູ, ກຽມພ້ອມສູ້ຮົບ ແລະສູ້ຮົບຢ່າງພິລະອາດຫານ, ສະກັດກັ້ນທຸກການລະເມີດລະບຽບກົດໝາຍ.

3. ເຂົ້າຮ່ວມ ແລະເປັນແບບຢ່າງໃນການຜະລິດ, ສ້າງເສດຖະກິດ, ແກ້ໄຂຊີວິດການເປັນຢູ່ໃຫ້ເຂັ້ມແຂງ ແລະອຸດົມຮັ່ງມີ.

4. ຕັ້ງໜ້າຝຶກຝົນຫລໍ່ຫລອມຕົນເອງ, ຮ່ຳຮຽນການເມືອງ, ຍົກລະດັບຄວາມຮູ້ທາງດ້ານການສຶກສາ, ວັດທະນະທຳ, ການທະຫານ ແລະລະບຽບກົດໝາຍ.

## ໝວດທີ່ IV
## ໂຄງປະກອບກົງຈັກ-ການຈັດຕັ້ງ

### ມາດຕາ 13. ໂຄງປະກອບກົງຈັກ-ການຈັດຕັ້ງຂອງກຳລັງກອງຫລອນ

**ກຳລັງກອງຫລອນ** ຖືກສ້າງຕັ້ງຂຶ້ນບົນພື້ນຖານການຄົ້ນຄວ້າ, ຊີ້ນຳໂດຍອີງການປົກຄອງຂັ້ນບ້ານ, ຜ່ານການຄັດເລືອກເຫັນດີຈາກປະຊາຊົນພາຍໃນບ້ານ ແລະໄດ້ຮັບການກວດກາ, ພິຈາລະນາແຕ່ງຕັ້ງ ແລະປົດຕຳແໜ່ງ ໂດຍຫົວໜ້າກອງບັນຊາການທະຫານເມືອງ.

ກຳລັງກອງຫລອນ ໄດ້ຈັດຕັ້ງເປັນກຳລັງປະເພດດຽວ ໃນນັ້ນ, ໃຫ້ມີກຳລັງເຄື່ອນທີ່ ແລະປະຈຳທີ່, ຂະໜາດການຈັດຕັ້ງແມ່ນເອົາບ້ານ, ກຸ່ມບ້ານເປັນຫຼັກ. ປະກອບເປັນໝູ່, ໝວດ, ກອງຮ້ອຍຕາມຈຸດພິເສດຂອງບ້ານ, ກຸ່ມບ້ານ ເພື່ອຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງວຽກງານປ້ອງກັນຊາດ.

### ມາດຕາ 14. ໂຄງປະກອບກົງຈັກ-ການຈັດຕັ້ງຂອງກຳລັງ ປກສ ບ້ານ

**ກຳລັງ ປກສ ບ້ານ** ຖືກສ້າງຕັ້ງຂຶ້ນບົນພື້ນຖານການຄົ້ນຄ້ວາ, ຊີ້ນຳໂດຍອີງການປົກຄອງບ້ານ, ຜ່ານການຄັດເລືອກເຫັນດີຈາກປະຊາຊົນພາຍໃນບ້ານ ແລະໄດ້ຮັບການກວດກາ, ສະເໜີຈາກ ປກສ ກຸ່ມບ້ານ ໃຫ້ຫົວໜ້າກອງບັນຊາການ ປກສ ເມືອງພິຈາລະນາແຕ່ງຕັ້ງ ແລະປົດຕຳແໜ່ງ.

ກົງຈັກການຈັດຕັ້ງຂອງກຳລັງ ປກສ ບ້ານ ແມ່ນຈັດຕັ້ງຈັດໃຫ້ມີໝູ່, ໝວດ, ກອງຮ້ອຍ ຕາມຄວາມເໝາະສົມຢູ່ທຸກບ້ານບົນພື້ນຖານຈຸດພິເສດທີ່ຕັ້ງຂອງແຕ່ລະບ້ານ, ປະກອບມີ: ຫົວໜ້າ, ຮອງ ແລະສະມາຊິກ ປກສ ບ້ານ ປະຈຳຢູ່ແຕ່ລະໜ່ວຍຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານ.

### ມາດຕາ 15. ໂຄງປະກອບກົງຈັກ-ການຈັດຕັ້ງຂອງກຳລັງ ປກສ ກຸ່ມບ້ານ

**ກຳລັງ ປກສ ກຸ່ມບ້ານ** ຖືກສ້າງຕັ້ງຂຶ້ນບົນພື້ນຖານ ຈຸດພິເສດຂອງກຸ່ມບ້ານໂດຍການຄົ້ນຄ້ວານຳສະເໜີຂອງກອງບັນຊາການ ປກສ ເມືອງ ໃຫ້ຫົວໜ້າກອງບັນຊາການ ປກສ ແຂວງ, ນະຄອນຫຼວງເປັນຜູ້ແຕ່ງຕັ້ງ ແລະປົດຕຳແໜ່ງ.

ກຳລັງ ປກສ ກຸ່ມບ້ານ ແບ່ງອອກເປັນ 3 ໜ່ວຍງານ ຄື:

1. ໜ່ວຍງານສັງລວມ ແລະຄຸ້ມຄອງພົນລະເມືອງ.
2. ໜ່ວຍງານສັງລວມຄຸ້ມຄອງ-ຕິດຕາມເປົ້າໝາຍ.
3. ໜ່ວຍງານສັງລວມກໍ່ສ້າງ ແລະອົບຮົມກຳລັງ ປກສ ບ້ານ.

ການປະກອບຈຳນວນພົນໃສ່ແຕ່ລະໜ່ວຍງານ ແມ່ນກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ກຳນົດ.

ມາດຕາ 16. ໂຄງປະກອບກົງຈັກ-ການຈັດຕັ້ງຂອງກຳລັງປ້ອງກັນພາຍໃນ

**ກຳລັງປ້ອງກັນພາຍໃນ** ແມ່ນຄະນະນຳກະຊວງ, ອົງການທຽບເທົ່າກະຊວງ, ສຳນັກງານ-ອົງການທີ່ກ່ຽວຂ້ອງຄົ້ນຄ້ວາ ກຳນົດ ແລະສ້າງຕັ້ງກຳລັງປ້ອງກັນພາຍໃນຂອງຕົນຂຶ້ນ ບົນພື້ນຖານຈຸດພິເສດຂອງວຽກງານໂດຍການສະເໜີຮັບຮູ້ ເຫັນດີ ແລະຊີ້ນຳຂອງກະຊວງປ້ອງກັນຄວາມສະຫງົບ.

ກຳລັງປ້ອງກັນພາຍໃນຈັດຕັ້ງເປັນໜ່ວຍປ້ອງກັນພາຍໃນໂດຍແມ່ນຄະນະນຳໜຶ່ງສະຫາຍຢູ່ຂັ້ນນັ້ນເປັນຫົວໜ້າ ແລະປະກອບມີ: ຮອງ, ຄະນະຢູ່ແຕ່ລະໜ່ວຍປ້ອງກັນພາຍໃນ ຕາມຄວາມເໝາະສົມຂອງວຽກງານແຕ່ລະບ່ອນ.

ມາດຕາ 17. ໂຄງປະກອບກົງຈັກ-ການຈັດຕັ້ງຂອງກຳລັງປ້ອງກັນຕົວ

**ກຳລັງປ້ອງກັນຕົວ** ຈັດຕັ້ງເປັນໝູ່, ໝວດ ແລະກອງຮ້ອຍ ອີງຕາມຈຸດພິເສດຂອງກະຊວງ, ອົງການທຽບເທົ່າກະຊວງ, ສຳນັກງານ-ອົງການ, ໂຮງຈັກ, ໂຮງງານ ແລະກິດຈະການຕ່າງໆ ໂດຍແມ່ນຄະນະນຳຂອງກະຊວງ, ອົງການທຽບເທົ່າກະຊວງ, ສຳນັກງານ-ອົງການ, ໂຮງຈັກ, ໂຮງງານ ແລະກິດຈະການຕ່າງໆ ເປັນຜູ້ຄົ້ນຄ້ວາພິຈາລະນາແຕ່ງຕັ້ງ ແລະປົດຕຳແໜ່ງ ໂດຍການສະເໜີຮັບຮູ້ ເຫັນດີຈາກກົມວິຊາສະເພາະຂອງກະຊວງປ້ອງກັນປະເທດ ຫຼື ກະຊວງປ້ອງກັນຄວາມສະຫງົບ ທີ່ມີຄວາມຮັບຜິດຊອບ.

## ໝວດທີ່ V
## ມາດຕະຖານ ແລະເງື່ອນໄຂ

ມາດຕາ 18. ມາດຕະຖານ ແລະເງື່ອນໄຂຂອງກຳລັງກອງຫຼອນ, ກຳລັງ ປກສ ບ້ານ

**ຜູ້ທີ່ຈະເປັນກອງຫຼອນ, ປກສ ບ້ານ ຕ້ອງມີມາດຕະຖານ ແລະເງື່ອນໄຂດັ່ງນີ້:**

1. ຕ້ອງເປັນຄົນລາວ.
2. ຖືສັນຊາດລາວໂດຍກຳເນີດ.
3. ທັງຍິງ ແລະຊາຍ ທີ່ມີອາຍຸແຕ່ 18 ປີຂຶ້ນໄປ.
4. ມີຊີວະປະຫວັດຈະແຈ້ງ.
5. ມີຫລັກໝັ້ນຄຸນທາດການເມືອງດີ, ຈຳແນກໄດ້ມິດ-ສັດຕູຢ່າງຈະແຈ້ງ.
6. ມີນ້ຳໃຈຮັກຊາດ, ຮັກບ້ານເກີດເມືອງນອນ, ຮັກລະບອບປະຊາທິປະໄຕປະຊາຊົນ, ມີຄວາມຈົງຮັກພັກດີຕໍ່ປະເທດຊາດ ແລະປະຊາຊົນ.
7. ມີລະດັບການສຶກສາມໍຕົ້ນຂຶ້ນໄປ, ກໍລະນີບ້ານທີ່ຈຳເປັນກໍ່ອາດໝູນໃຊ້ຕາມຄວາມເໝາະສົມ.
8. ເປັນຜູ້ທີ່ມີນ້ຳໃຈບຸກບືນ, ມີສຸຂະພາບແຂງແຮງດີ, ຫ້າວຫັນກຽມພ້ອມຮັບໃຊ້ໃນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບຂອງບ້ານ.

ນາຍ ແລະພົນທະຫານ, ນາຍ ແລະພົນຕຳຫຼວດ ທີ່ອອກຈາກກຳລັງປະຈຳການກັບຄືນທ້ອງຖິ່ນຜູ້ທີ່ມີມາດຕະຖານ-ເງື່ອນໄຂກໍ່ຈະໄດ້ເຂົ້າເປັນກອງຫຼອນ ແລະ ປກສ ບ້ານໄດ້.

ມາດຕາ 19. **ມາດຕະຖານ ແລະເງື່ອນໄຂຂອງກຳລັງປ້ອງກັນພາຍໃນ**

**ກຳລັງປ້ອງກັນພາຍໃນ** ແມ່ນພະນັກງານ, ລັດຖະກອນຫຼັກແຫຼ່ງ ທີ່ສັງກັດຢູ່ກະຊວງ, ອົງການທຽບເທົ່າກະຊວງ, ສຳນັກງານ-ອົງການ, ໂຮງຈັກ, ໂຮງງານ ແລະກິດຈະການຕ່າງໆ ຜູ້ທີ່ມີມາດຕະຖານ ແລະເງື່ອນໄຂດັ່ງນີ້:

1. ມີທັດສະນະຫຼັກໝັ້ນຄຸນທາດການເມືອງໜັກແໜ້ນ.
2. ກຳໄດ້ລະບຽບກົດໝາຍຂອງລັດ.
3. ມີຄຸນສົມບັດດີ.
4. ມີນ້ຳໃຈຮັກຊາດ.
5. ມີສຸຂະພາບແຂງແຮງ.
6. ມີຄວາມທ້າວທັນຕໍ່ໜ້າທີ່ວຽກງານ ແລະມີຄວາມຕື່ນຕົວຮັບໃຊ້ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

ມາດຕາ 20. **ມາດຕະຖານ ແລະເງື່ອນໄຂຂອງກຳລັງປ້ອງກັນຕົວ**

**ກຳລັງປ້ອງກັນຕົວ** ແມ່ນພະນັກງານ, ລັດຖະກອນ ທີ່ສັງກັດຢູ່ກະຊວງ, ອົງການທຽບເທົ່າກະຊວງ, ສຳນັກງານ-ອົງການ, ໂຮງຈັກ, ໂຮງງານ ແລະກິດຈະການຕ່າງໆ ຜູ້ທີ່ມີມາດຕະຖານ ແລະເງື່ອນໄຂດັ່ງນີ້:

1. ມີຄວາມບໍລິສຸດຕໍ່ຊາດ, ຕໍ່ປະຊາຊົນ ແລະຕໍ່ລະບອບປະຊາທິປະໄຕປະຊາຊົນ.
2. ມີທັດສະນະຫລັກໝັ້ນ ຈຳແນກໄດ້ມິດ-ສັດຕູຢ່າງຈະແຈ້ງ.
3. ເປັນແບບຢ່າງໃນການປະຕິບັດແນວທາງນະໂຍບາຍຂອງພັກ, ເຄົາລົບ ແລະປະຕິບັດລະບຽບກົດໝາຍຂອງລັດ.
4. ມີສຸຂະພາບແຂງແຮງ.

## ໝວດທີ່ VI

## ການສຶກສາອົບຮົມຍົກລະດັບວິຊາສະເພາະ ແລະງົບປະມານຮັບໃຊ້

ມາດຕາ 21. **ການສຶກສາອົບຮົມຍົກລະດັບ**

**ກຳລັງກອງຫຼອນ** ແມ່ນກອງບັນຊາການທະຫານເມືອງ, ກອງບັນຊາການທະຫານແຂວງ, ນະຄອນຫຼວງ ເປັນຜູ້ຮັບຜິດຊອບໃນການຝຶກອົບຮົມທັດແອບວິຊາສະເພາະ.

ກະຊວງປ້ອງກັນປະເທດເປັນຜູ້ຊີ້ນຳ ແລະກວດກາ.

**ກຳລັງ ປກສ ບ້ານ** ແມ່ນກອງບັນຊາການ ປກສ ເມືອງ, ກອງບັນຊາການ ປກສ ແຂວງ, ນະຄອນຫຼວງ ເປັນຜູ້ຮັບຜິດຊອບຝຶກອົບຮົມດ້ານວິຊາສະເພາະ.

ກະຊວງປ້ອງກັນຄວາມສະຫງົບເປັນຜູ້ຊີ້ນຳ ແລະກວດກາ.

**ກຳລັງ ປກສ ກຸ່ມບ້ານ** ແມ່ນກະຊວງປ້ອງກັນຄວາມສະຫງົບ, ກອງບັນຊາການ ປກສ ແຂວງ, ນະຄອນຫຼວງ, ກອງບັນຊາການ ປກສ ເມືອງ ເປັນຜູ້ຮັບຜິດຊອບໃນການຝຶກອົບຮົມດ້ານວິຊາສະເພາະໃຫ້ແກ່ກຳລັງ ປກສ ກຸ່ມບ້ານເປັນແຕ່ລະໄລຍະຕາມຄວາມເໝາະສົມ.

**ກຳລັງປ້ອງກັນພາຍໃນ** ແມ່ນກະຊວງປ້ອງກັນຄວາມສະຫງົບເປັນຜູ້ຮັບຜິດຊອບໃນການບຳລຸງຍົກລະດັບຕາມຫລັກການວິຊາສະເພາະທີ່ໄດ້ກຳນົດໄວ້ ແລະແທດເໝາະກັບສະພາບຄວາມເປັນຈິງຂອງສຳນັກງານໃນແຕ່ລະໄລຍະ.

ກະຊວງ, ອົງການທຽບເທົ່າກະຊວງ, ສຳນັກງານ-ອົງການທີ່ກ່ຽວຂ້ອງປະສານສົມທົບກັບກະຊວງປ້ອງກັນຄວາມສະຫງົບ ເພື່ອກຳນົດການປະກອບອຸປະກອນທີ່ຈຳເປັນໃຫ້ກຳລັງປ້ອງກັນພາຍໃນຕາມເງື່ອນໄຂ ແລະຄວາມຮຽກຮ້ອງຕ້ອງການຂອງວຽກງານວິຊາສະເພາະຢ່າງເໝາະສົມ.

**ກຳລັງປ້ອງກັນຕົວ** ກະຊວງປ້ອງກັນປະເທດ ແລະກະຊວງປ້ອງກັນຄວາມສະຫງົບ, ກອງບັນຊາການທະຫານແຂວງ, ນະຄອນຫຼວງ, ກອງບັນຊາການ ປກສ ແຂວງ, ນະຄອນຫລວງ ຮັບຜິດຊອບໃນການອົບຮົມ, ຍົກລະດັບວິຊາສະເພາະຕາມຄວາມເໝາະສົມ ໃນຂອບເຂດຄວາມຮັບຜິດຊອບ.

### ມາດຕາ 22. ງົບປະມານຮັບໃຊ້

ກະຊວງປ້ອງກັນປະເທດ ເປັນຜູ້ຮັບຜິດຊອບງົບປະມານຮັບໃຊ້ວຽກງານຝຶກອົບຮົມທັດແອບ ແລະເຄື່ອນໄຫວໃຫ້ແກ່ກຳລັງກອງຫຼອນ ສະເພາະແຕ່ລະປີ.

ແຂວງ, ນະຄອນຫຼວງ, ເມືອງ ມີງົບປະມານສະເພາະຂອງຕົນໃນການຮັບໃຊ້ຝຶກອົບຮົມທັດແອບເຄື່ອນໄຫວປະຕິບັດໜ້າທີ່, ປະກອບອຸປະກອນຮັບໃຊ້ທີ່ຈຳເປັນຈຳນວນໜຶ່ງ, ສະຖານທີ່ເຮັດວຽກໃຫ້ກຳລັງກອງຫຼອນ, ກຳລັງ ປກສ ບ້ານ ແທດເໝາະກັບເງື່ອນໄຂຄວາມສາມາດຕົວຈິງ ແລະຕາມນະໂຍບາຍຂອງກະຊວງປ້ອງກັນປະເທດ, ກະຊວງປ້ອງກັນຄວາມສະຫງົບ ກຳນົດໃຫ້.

ບ້ານໃຫ້ມີຄັງສະສົມປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເພື່ອໃຊ້ຈ່າຍໃນການເຄື່ອນໄຫວວຽກງານ ແລະການປະກອບເຄື່ອງນຸ່ງ.

ແຕ່ລະຄອບຄົວມີພັນທະປະກອບສ່ວນເຂົ້າເປືອກ 20 ກິໂລກຼາມ ຂຶ້ນໄປ, ສຳລັບຄອບຄົວທີ່ບໍ່ໄດ້ທຳການຜະລິດແມ່ນໃຫ້ຄິດໄລ່ເປັນເງິນຕາມລາຄາເຂົ້າ 20 ກິໂລກຼາມ ໃນແຕ່ລະປີ (ຍົກເວັ້ນຄອບຄົວ ທີ່ທຸກຍາກ, ບໍ່ກຸ້ມກິນ).

ກະຊວງປ້ອງກັນຄວາມສະຫງົບ, ກອງບັນຊາການ ປກສ ແຂວງ, ນະຄອນຫລວງ, ກອງບັນຊາການ ປກສ ເມືອງ ເປັນຜູ້ຮັບຜິດຊອບງົບປະມານຮັບໃຊ້ໃນການເຄື່ອນໄຫວວຽກງານຂອງກຳລັງ ປກສ ບ້ານ, ກຳລັງ ປກສ ກຸ່ມບ້ານ ຕາມນະໂຍບາຍງົບປະມານທີ່ໄດ້ກຳນົດໃຫ້.

ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເປັນຜູ້ຮັບຜິດຊອບປະກອບເພີ່ມຕື່ມ ດ້ານງົບປະມານ, ອຸປະກອນຮັບໃຊ້ຕ່າງໆ, ສະຖານທີ່ເຮັດວຽກໃຫ້ກຳລັງ ປກສ ບ້ານ, ກຳລັງ ປກສ ກຸ່ມບ້ານ ຕາມເງື່ອນໄຂຄວາມສາມາດຕົວຈິງ.

**ກຳລັງປ້ອງກັນພາຍໃນ, ກຳລັງປ້ອງກັນຕົວ** ມອບໃຫ້ກະຊວງ, ອົງການທຽບເທົ່າກະຊວງ, ສຳນັກງານ, ອົງການ ທີ່ກ່ຽວຂ້ອງຮັບຜິດຊອບງົບປະມານຮັບໃຊ້ໃນການເຄື່ອນໄຫວປະຕິບັດໜ້າທີ່ຕາມເງື່ອນໄຂຕົວຈິງ ແລະ ນະໂຍບາຍທີ່ພັກ-ລັດໄດ້ກຳນົດໄວ້.

## ໝວດທີ່ VII
## ເຄື່ອງແບບ, ເຄື່ອງໝາຍ ແລະເຄື່ອງນຸ່ງ

### ມາດຕາ 23. ເຄື່ອງແບບ ແລະເຄື່ອງໝາຍ

ເຄື່ອງແບບ ແລະເຄື່ອງໝາຍຂອງກຳລັງກອງຫຼອນເປັນປອກແຂນ, ພື້ນສີແດງ, ມີຕົວອັກສອນສີຂາວ ຂຽນຫຍໍ້ວ່າ " ກ ຫຼ " ຊຶ່ງອອກແບບໂດຍກະຊວງປ້ອງກັນປະເທດ.

ເຄື່ອງແບບ ແລະເຄື່ອງໝາຍຂອງກຳລັງ ປກສ ບ້ານເປັນປອກແຂນ, ພື້ນສີຂຽວ, ມີຕົວອັກສອນສີຂາວ ຂຽນຫຍໍ້ວ່າ " ປກສ ບ້ານ" ຊຶ່ງອອກແບບໂດຍກະຊວງປ້ອງກັນຄວາມສະຫງົບ.

ເຄື່ອງແບບ ແລະເຄື່ອງໝາຍຂອງກຳລັງປ້ອງກັນຕົວເປັນປອກແຂນ, ພື້ນສີແດງ, ມີຕົວອັກສອນສີຂາວ ຂຽນຫຍໍ້ວ່າ " ກປຕ " ຊຶ່ງອອກແບບໂດຍກະຊວງປ້ອງກັນປະເທດ ແລະກະຊວງປ້ອງກັນຄວາມສະຫງົບ.

### ມາດຕາ 24. ເຄື່ອງນຸ່ງ

**ກຳລັງກອງຫຼອນ, ກຳລັງ ປກສ ບ້ານ** ໄດ້ຮັບເຄື່ອງນຸ່ງປີລະໜຶ່ງຊຸດຕໍ່ຄົນ ໂດຍແມ່ນອົງການປົກຄອງບ້ານ ເປັນຜູ້ຮັບຜິດຊອບ.

ສຳລັບກຳລັງກອງຫຼອນ ເວລາເຄື່ອນໄຫວປະຕິບັດໜ້າທີ່ຮ່ວມກັບກຳລັງປະຈຳການ ຕາມຄຳສັ່ງນັບແຕ່ 15 ວັນ ຂຶ້ນໄປຈະໄດ້ຮັບເຄື່ອງນຸ່ງ, ອຸປະກອນເພີ່ມຕື່ມໂດຍຂັ້ນທີ່ສັ່ງນັ້ນເປັນຜູ້ຮັບຜິດຊອບ.

**ກຳລັງປ້ອງກັນຕົວ** ໄດ້ຮັບເຄື່ອງນຸ່ງປີລະຊຸດຕໍ່ຄົນ ໂດຍແມ່ນກະຊວງ, ອົງການທຽບເທົ່າກະຊວງ, ສຳນັກ ງານ-ອົງການ, ໂຮງຈັກ, ໂຮງງານ ແລະກິດຈະການຕ່າງໆ ທີ່ກ່ຽວຂ້ອງເປັນຜູ້ຮັບຜິດຊອບກ່ຽວກັບງົບປະມານ ການໃຊ້ຈ່າຍ.

ອຸປະກອນຮັບໃຊ້ທີ່ຈຳເປັນຈຳນວນໜຶ່ງໂດຍກະຊວງ, ອົງການທຽບເທົ່າກະຊວງ, ໂຮງຈັກ, ໂຮງງານ ແລະກິດຈະການຕ່າງໆ ສົມທົບກັບກະຊວງປ້ອງກັນປະເທດ ແລະກະຊວງປ້ອງກັນຄວາມສະຫງົບ.

## ໝວດທີ່ VIII
## ການປະຕິບັດນະໂຍບາຍ ແລະການປະຕິບັດວິໄນ

### ມາດຕາ 25. ການປະຕິບັດນະໂຍບາຍ

ກົມກອງ ຫຼື ບຸກຄົນທີ່ມີຜົນງານດີຈະໄດ້ຮັບການຍ້ອງຍໍຕາມລະບອບນະໂຍບາຍຂັ້ນຕ່າງໆ, ກໍລະນີມີຜົນ

ງານດີເດັ່ນຕໍ່ວຽກງານດັ່ງກ່າວ ຄະນະບັນຊາການກອງທີ່ກ່ຽວຂ້ອງ ນຳສະເໜີຜົນງານຂອງຜູ້ກ່ຽວຕໍ່ກະຊວງປ້ອງກັນປະເທດ, ກະຊວງປ້ອງກັນຄວາມສະຫງົບ, ລັດຖະບານເພື່ອປະຕິບັດນະໂຍບາຍຢ່າງເໝາະສົມ.

ກໍລະນີອອກເຄື່ອນໄຫວປະຕິບັດໜ້າທີ່ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ມີຄວາມຮັບຜິດຊອບໃນການເບິ່ງແຍງ ແລະຊ່ວຍເຫລືອຄອບຄົວຂອງເຂົາເຈົ້າຕາມຄວາມເໝາະສົມ.

ໃນເວລາອອກເຄື່ອນໄຫວສູ້ຮົບຈະໄດ້ຮັບເງິນອຸດໜູນຕາມຂັ້ນຂອງຕົນ, ໃນກໍລະນີອອກໄປປະຕິບັດວຽກງານ ຫາກຖືກບາດເຈັບ, ເສຍອົງຄະ ຫລື ເສຍສະຫລະຊີວິດ ຈະໄດ້ຮັບການປິ່ນປົວ ແລະນະໂຍບາຍຄືກັນກັບທະຫານປະຈຳການ.

ສຳລັບກຳລັງປ້ອງກັນພາຍໃນ, ກຳລັງປ້ອງກັນຕົວ ໃຫ້ປະຕິບັດນະໂຍບາຍຕາມກົດໝາຍແຮງງານ ແລະລະບອບປະກັນສັງຄົມຕໍ່ພະນັກງານ, ລັດຖະກອນ.

ສຳລັບກຳລັງ ປກສ ບ້ານ ຜູ້ທີ່ມີເງື່ອນໄຂກໍ່ຮັບເອົາເຂົ້າກຳລັງປ້ອງກັນຄວາມສະຫງົບອາຊີບ, ແລ້ວສົ່ງໄປຮ່ຳຮຽນວິຊາສະເພາະ ຫຼື ປະຈຳການຢູ່ ປກສ ກຸ່ມບ້ານຕາມຄວາມເໝາະສົມ.

**ມາດຕາ 26. ການປະຕິບັດວິໄນ**

ກົມກອງ ຫຼື ບຸກຄົນທີ່ປະຕິບັດໜ້າທີ່ບໍ່ສຳເລັດ ຫຼື ມີການລະເມີດຕໍ່ມະຕິຄຳສັ່ງຂອງຂັ້ນເທິງ ແລະລະບຽບກົດໝາຍຂອງລັດ ຕ້ອງໄດ້ຮັບການສຶກສາອົບຮົມ, ກ່າວເຕືອນ, ສຳຫລວດກວດກາ. ກໍລະນີມີຄວາມຜິດຮ້າຍແຮງຕ້ອງປະຕິບັດວິໄນຢ່າງເຂັ້ມງວດຕາມລະບຽບການ ແລະຖືກລົງໂທດສະຖານເບົາ ຫລື ໜັກຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ IX
## ບົດບັນຍັດສຸດທ້າຍ

**ມາດຕາ 27. ການຈັດຕັ້ງປະຕິບັດ**

ມອບໃຫ້ກະຊວງປ້ອງກັນປະເທດ, ກະຊວງປ້ອງກັນຄວາມສະຫງົບ ກຳນົດລະບຽບການລະອຽດ ເພື່ອຈັດຕັ້ງປະຕິບັດດຳລັດສະບັບນີ້.

ກະຊວງ, ອົງການທຽບເທົ່າກະຊວງ, ທະບວງ, ສຳນັກງານ-ອົງການ, ອົງການຈັດຕັ້ງທຸກຂັ້ນ, ອົງການປົກຄອງທ້ອງຖິ່ນ, ໂຮງຈັກ, ໂຮງງານ ແລະກິດຈະການຕ່າງໆຈົ່ງຮັບຮູ້ ແລະຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

**ມາດຕາ 28. ຜົນສັກສິດ**

ດຳລັດສະບັບນີ້ມີຜົນສັກສິດໃຊ້ບັງຄັບນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ. ທຸກຄຳສັ່ງ, ຂໍ້ກຳນົດ, ບົດບັນຍັດທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ນາຍົກລັດຖະມົນຕີແຫ່ງ ສປປ ລາວ**

ບົວສອນ ບຸບຜາວັນ